ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເຈົ້າແຂວງ

ເລກທີ.....588...../ຈຂ

ຫຼວງນ້ຳທາ, ວັນທີ...26... ພຶດສະພາ 2025

# ຂໍ້ຕົກລົງ

## ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ( ສະບັບປັບປຸງ ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015;
- ອີງຕາມ ກົດໝາຍວ່າດ້ວຍຢາເສບຕິດ ສະບັບເລກທີ ເລກທີ 10 /ສພຊ, ລົງວັນທີ 25 ທັນວາ 2021;
- ອີງຕາມ ດຳລັດ ສະບັບເລກທີ 639/ລບ, ລົງວັນທີ 19 ພະຈິກ 2024 ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 8 ຂອງສະພາປະຊາຊົນແຂວງຫຼວງນ້ຳທາ ຊຸດທີ II ສະບັບເລກທີ 26/ສພຂ, ລົງວັນທີ 28 ເມສາ 2025 ວ່າດ້ວຍການຮັບຮອງເອົາ ຂໍ້ຕົກລົງ ຂອງເຈົ້າແຂວງ ວ່າດ້ວຍກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດແຂວງ.

**ເຈົ້າແຂວງຫຼວງນ້ຳທາ ຕົກລົງ:**

## ໝວດທີ1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ກວດກາ ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ເພື່ອລະດົມ ແລະ ສະສົມທຶນຈາກພາຍໃນ ແລະ ຕ່າງປະເທດ ແນໃສ່ ເພື່ອສະໜອງທຶນໃຫ້ແກ່ວຽກງານຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ວຽກງານອື່ນໆ ທີ່ຕິດພັນກັບ ຢາເສບຕິດ ໃຫ້ມີຄວາມຍືນຍົງ, ໂປ່ງໃສ ແລະ ສາມາດກວດສອບໄດ້ ເພື່ອປະກອບສ່ວນ ເຮັດໃຫ້ມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໃນສັງຄົມ.

**ມາດຕາ 2 ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດແຂວງ**

ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດແຂວງ ຂຽນຫຍໍ້ວ່າ "ກຄສຂ" ແມ່ນກອງທຶນທີ່ສ້າງຂຶ້ນເພື່ອສະສົມ ແລະ ລະດົມທຶນຈາກແຫຼ່ງຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຮັບປະກັນ ໃຫ້ມີງົບປະມານພຽງພໍ, ຍືນຍົງ ແລະ ສາມາດນຳໃຊ້ເຂົ້າໃນວຽກງານ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂອງແຂວງ.

**ມາດຕາ 3 ການອະທິບາຍຄຳສັບ**

1. ກຄສຂ: ໝາຍເຖິງ ກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດແຂວງ;
2. ກອງທຶນ: ໝາຍເຖິງການທ້ອນໂຮມເງິນ ແລະ ຊັບສິນທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຈາກຫຼາຍໆດ້ານ ແລະ ຫຼາຍພາກສ່ວນມາໂຮມໄວ້ສະຖານທີ່ດຽວກັນ;
3. ການຄວບຄຸມ: ໝາຍເຖິງການຈຳກັດ ການກະທຳຕ່າງໆ ຕາມລະບຽບຫຼັກການ ເພື່ອບໍ່ໃຫ້ເກີດຜົນກະທົບທາງດ້ານລົບ;
4. ການສະກັດກັ້ນ: ໝາຍເຖິງ ການປ້ອງກັນດ້ວຍວິທີການຕ່າງໆ ເພື່ອບໍ່ໃຫ້ເກີດມີບັນຫາ ແລະ ເປັນໄພອັນຕະລາຍຕໍ່ກັບບຸກຄົນ, ອົງກອນ, ສັງຄົມ ແລະ ປະເທດຊາດ;
5. ຕ້ານ: ໝາຍເຖິງ ການຕອບໂຕ້ ຫຼື ວິທີການກຳຈັດ - ທຳລາຍ ບັນຫາທີ່ມີໃຫ້ໝົດໄປ.

**ມາດຕາ 4 ຫຼັກການຄຸ້ມຄອງ ແລະ ນຳໃຊ້ກອງທຶນ**

1. ຄຸ້ມຄອງຢ່າງລວມສູນ, ເປັນເອກະພາບກັນໃນການຄຸ້ມຄອງຕາມລະບຽບກົດໝາຍ ແລະ ລະບົບງົບປະມານແຫ່ງລັດ ໃນຂອບເຂດທົ່ວແຂວງ;
2. ຮັບປະກັນການຕິດຕາມ, ກວດກາ, ສະຫຼຸບ, ຕີລາຄາການນຳໃຊ້ກອງທຶນໃຫ້ມີປະສິບດທິພາບ, ວອງໄວ, ຍຸຕິທຳ ແລະ ສາມາດກວດສອບໄດ້;
3. ຮັບປະກັນຄວາມໂປ່ງໃສ ໃນການບໍລິຫານ ແລະ ການນຳໃຊ້ກອງທຶນໃຫ້ຖືກຕ້ອງຕາມເປົ້າໝາຍ ແລະ ເກີດຜົນປະໂຫຍດສູງສຸດ.

**ມາດຕາ 5 ຂອບເຂດການນຳໃຊ້ຂໍ້ຕົກລົງ**

ຂໍ້ຕົກລົງ ສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ພົວພັນກັບວຽກງານ ກວດກາ, ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃນຂອບເຂດທົ່ວແຂວງຫຼວງນໍ້າທາ.

## ໝວດທີ 2
## ແຫຼ່ງລາຍຮັບ, ການຈັດແບ່ງ ແລະ ການນຳໃຊ້ງົບປະມານກອງທຶນ

**ມາດຕາ 6 ແຫຼ່ງລາຍຮັບກອງທຶນ**

1. ງົບປະມານໄດ້ມາຈາກການຈັດແບ່ງເງິນເກີນແຜນຂອງແຂວງ 1 %;
2. ໄດ້ຈາກການປະມູນຂາຍຊັບສິນ, ພາຫະນະ, ວັດຖຸປະກອນ, ຄ່າເຊົ່າ ຫຼື ສຳປະທານຊັບສິນ ແລະ ເງິນຝາກທີ່ ສານປະຊາຊົນຕັດສິນຮິບເປັນຂອງລັດ ລວມທັງຄ່າປັບໃໝທາງອາຍາ ແລະ ທາງແພ່ງທີ່ພົວພັນກັບບັນຫາຄະດີຢາເສບຕິດ;
3. ການຂາຍຜະລິດຕະພັນ, ການນຳໃຊ້ແຮງງານບຸກຄົນຈາກສູນປິ່ນປົວ, ການຟື້ນຟູສຸຂະພາບ ແລະ ການຝຶກວິຊາຊີບ ໃຫ້ຜູ້ຕິດຢາເສບຕິດ;
4. ການຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການຈັດຕັ້ງສາກົນ;
5. ການປະກອບສ່ວນຂອງ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ;
6. ການເຄື່ອນໄຫວກິດຈະກຳ ຫາລາຍໄດ້ໃດໜຶ່ງເຊັ່ນ: ການແຂ່ງຂັນກິລາ - ກາຍຍະກຳ, ການສະແດງສິລະປະວັນນະຄະດີ ເພື່ອລະດົມທຶນ ແລະ ອື່ນໆ.

**ມາດຕາ 7 ການຈັດແບ່ງລາຍຮັບທີ່ໄດ້ຈາກການດຳເນີນຄະດີກ່ຽວກັບຢາເສບຕິດ**

ລາຍຮັບທີ່ໄດ້ຈາກການດຳເນີນຄະດີຢາເສບຕິດ ຕ້ອງໄດ້ຈັດແບ່ງ ແລະ ຈົດຮັບເຂົ້າງົບປະມານແຫ່ງລັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ, ເຊິ່ງໄດ້ຈັດແບ່ງດັ່ງນີ້:

1. ສາມສິບສ່ວນຮ້ອຍ 30% ມອບເຂົ້າງົບປະມານ ຂອງແຂວງ;
2. ຫົກສິບສ່ວນຮ້ອຍ 60% ມອບເຂົ້າເປັນເງິນກອງທຶນ ຢາເສບຕິດ ຂອງແຂວງ;
3. ສິບສ່ວນຮ້ອຍ 10% ມອບໃຫ້ກອງທຶນ ຢາເສບຕິດສູນກາງ.

**ມາດຕາ 8 ການນຳໃຊ້ງົບປະມານກອງທຶນເຂົ້າໃນການປະຕິບັດວຽກງານ**

ງົບປະມານຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂອງແຂວງ ແມ່ນນຳໃຊ້ ເຂົ້າໃນການ ປະຕິບັດວຽກງານຕ່າງໆດັ່ງນີ້:

1. ການໂຄສະນາເຜີຍແຜ່ກົດໝາຍ, ມະຕິ, ຄຳສັ່ງ ແລະ ບັນດານິຕິກຳກ່ຽວກັບຢາເສບຕິດ;
2. ການປະຕິບັດໜ້າທີ່ວຽກງານ ຂອງພາກສ່ວນວິຊາສະເພາະ ກ່ຽວກັບການດຳເນີນຄະດີຢາເສບຕິດຕາມຂະບວນການຍຸຕິທຳ ລວມທັງຄຳຕັດສິນຄະດີຂອງສານ, ການປະຕິບັດມາດຕະການທາງດ້ານກົດໝາຍຕໍ່ຜູ້ກະທຳຜິດ, ການເຄື່ອນໄຫວວຽກງານສະກັດກັ້ນ, ຕ້ານຢາເສບຕິດ, ການກວດ - ວິໄຈຢາເສບຕິດ, ການສຶກສາອົບຮົມ, ປູກຈິດສຳນຶກໃຫ້ທົ່ວສັງຄົມໄດ້ຮັບຮູ້ ເຂົ້າໃຈເຖິງພິດໄພ ແລະ ຜົນຮ້າຍຂອງຢາເສບຕິດ;
3. ການປິ່ນປົວ, ຟື້ນຟູສຸຂະພາບ ແລະ ເຝິກວິຊາຊີບ ໃຫ້ແກ່ຜູ້ຕິດຢາເສບຕິດ;
4. ຊຸກຍູ້, ສົ່ງເສີມ ໃຫ້ປະຊາຊົນຫັນໄປປະກອບອາຊີບອື່ນ ເພື່ອປ່ຽນແທນການປູກພືດທີ່ມີສານຢາເສບຕິດ ທີ່ຜິດກົດໝາຍ;
5. ການປະຕິບັດມາດຕະການ ທາງດ້ານກົດໝາຍ ຕໍ່ຜູ້ທີ່ກະທຳຜິດຕໍ່ຄະດີຢາເສບຕິດ ແລະ ການເຄື່ອນໄຫວວຽກງານ ສະກັດກັ້ນ - ຕ້ານຢາເສບຕິດ;
6. ນຳໃຊ້ເຂົ້າໃນການສ້າງ, ປັບປຸງ ແລະພັດທະນາສະຖານທີ່ເກັບມ້ຽນຂອງກາງຄະດີຂອງແຂວງ ແລະເມືອງ;
7. ບໍລິຫານວຽກງານກອງທຶນ, ພົວພັນ - ຮ່ວມມື, ແລກປ່ຽນບົດຮຽນ ກັບບັນດາແຂວງ, ສູນກາງ ແລະ ຕ່າງປະເທດ ກ່ຽວກັບວຽກງານແກ້ໄຂບັນຫາຢາເສບຕິດ;
8. ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ເພື່ອປະກອບເຂົ້າກອງທຶນ.

**ມາດຕາ 9 ການຂໍອະນຸມັດນຳໃຊ້ເງິນກອງທຶນ**

ທຸກພາກສ່ວນຂອງແຂວງ ແລະ ເມືອງ ທີ່ຕ້ອງການນຳໃຊ້ງົບປະມານກອງທຶນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບການແກ້ໄຂບັນຫາຢາເສບຕິດ, ຕ້ອງໄດ້ສ້າງແຜນວຽກ, ແຜນງົບປະມານລະອຽດ ແລະ ຖືກຕ້ອງ ຕາມລະບຽບການ ຜ່ານສາຍຕັ້ງຂອງຕົນ ເພື່ອສະເໜີຕໍ່ ຄະນະກຳມະການຄວບຄຸມກອງທຶນ ໂດຍຜ່ານ ກອງເລຂາ ກອງທຶນຄົ້ນຄວ້າ ຕາມລະບຽບການນຳໃຊ້ກອງທຶນຈຶ່ງນຳສະເໜີໃຫ້ຄະນະກຳມະການຄຸ້ມຄອງກອງທຶນ ພິຈາລະນາ ອອກ ຂໍ້ຕົກລົງອະນຸມັດນຳໃຊ້ງົບປະມານ ຕາມລະບຽບການ.

**ມາດຕາ 10 ການຖອນເງິນກອງທຶນ**

1. ການຖອນເງິນກອງທຶນ ຕ້ອງມີລາຍເຊັນຜູ້ທີ່ໄດ້ຮັບມອບສິດໃນການຖອນເງິນເທົ່ານັ້ນ;
2. ການຖອນເງິນກອງທຶນຕ້ອງປະຕິບັດຕາມ ຂໍ້ຕົກລົງຂອງປະທານ ຫຼື ຮອງປະທານ ຄະນະກຳມະການ ຄວບຄຸມກອງທຶນ ໂດຍປະຕິບັດຕາມລະບຽບການຂອງກອງທຶນ ແລະ ຄັງເງິນ ທີ່ໄດ້ ກຳນົດໄວ້ໃນກົດໝາຍ ວ່າດ້ວຍງົບປະມານ;
3. ການຖອນເງິນອອກຈາກບັນຊີກອງທຶນ ກຄສຂ ແມ່ນບໍ່ໃຫ້ ເກີນລາຍຮັບທັງໝົດຂອງກອງທຶນໃນແຕ່ລະສົກງົບປະມານ ແລະ ຕ້ອງໃຫ້ມີເງິນແຮ່ໄວ້ຢ່າງພຽງພໍເພື່ອຊຳລະໜີ້ຕ້ອງຈ່າຍ ທີ່ເກີດຂຶ້ນໃນສົກງົບປະມານ.

**ມາດຕາ 11 ສິດໃນການສັ່ງຈ່າຍ ແລະ ການຖອນເງິນກອງທຶນ**

1. ປະທານ ຫຼື ຮອງປະທານ ຄະນະກຳມະການຄວບຄຸມກອງທຶນ ຫຼື ຜູ້ໄດ້ຮັບມອບສິດ;
2. ກໍລະນີສຸກເສີນ: ເຈົ້າແຂວງ ສາມາດເຊັນອະນຸມັດຈ່າຍງົບປະມານໄດ້ໂດຍກົງ.

**ມາດຕາ 12 ການຄຸ້ມຄອງ ແລະ ການເກັບຮັກສາເງິນກອງທຶນ**

1. ເງິນກອງທຶນ ກຄສຂ ຕ້ອງເປີດບັນຊີ ແລະ ເກັບຮັກສາໄວ້ ຢູ່ຄັງເງິນແຂວງ ຫຼວງນ້ຳທາ ເທົ່ານັ້ນ;
2. ທຸກໆການເຄື່ອນໄຫວຂອງບັນຊີກອງທຶນ ຕ້ອງຜ່ານລະບົບບັນຊີຂອງຄັງເງິນແຂວງ ຕາມກົດໝາຍ ແລະ ລະບຽບການ;
3. ທຸກຄັ້ງທີ່ໄດ້ຮັບຮ່ວງເງິນຂອງກອງທຶນ ກຄສຂ ຕ້ອງມອບເຂົ້າບັນຊີຂອງກອງທຶນ ບໍ່ໃຫ້ກາຍ 5 ວັນທາງລັດຖະການ.

## ໝວດທີ 3
## ໂຄງປະກອບ ຂອງຄະນະກຳມະການກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ

### ມາດຕາ 13 ຄະນະກຳມະການກອງທຶນ

ຄະນະກຳມະການກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນແຂວງ ແມ່ນອົງການ ທີ່ບໍ່ປະຈຳການໂດຍການເອົາບັນດາ ທ່ານຫົວໜ້າ - ຮອງອົງການລັດທີ່ກ່ຽວຂ້ອງ ເປັນຄະນະດັ່ງກ່າວເຊິ່ງມີພາລະບົດບາດ ໜ້າທີ່ເຄື່ອນໄຫວວຽກງານຂອງກອງທຶນໃຫ້ໄດ້ຮັບຜົນດີ.

### ມາດຕາ 14 ໂຄງປະກອບບຸກຄະລາກອນ ຂອງຄະນະກຳມະການ ກຄສຂ ປະກອບດ້ວຍ

| | |
|---|---|
| 1. ຮອງເຈົ້າແຂວງ | ເປັນປະທານ; |
| 2. ຫົວໜ້າກອງບັນຊາການ ປກສ ແຂວງ | ເປັນຮອງປະທານ; |
| 3. ຮອງຫົວໜ້າພະແນກຍຸຕິທຳແຂວງ | ເປັນກຳມະການ; |
| 4. ຮອງຫົວໜ້າຫ້ອງວ່າການແຂວງ | ເປັນກຳມະການ; |
| 5. ຮອງຫົວໜ້າອົງການໄອຍະການປະຊາຊົນແຂວງ | ເປັນກຳມະການ; |
| 6. ຮອງປະທານສານປະຊາຊົນແຂວງ | ເປັນກຳມະການ; |
| 7. ຮອງຫົວໜ້າກອງບັນຊາການທະຫານແຂວງ | ເປັນກຳມະການ; |
| 8. ຮອງຫົວໜ້າພະແນກການເງິນແຂວງ | ເປັນກຳມະການ; |
| 9. ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ | ເປັນກຳມະການ; |
| 10. ຫົວໜ້າຫ້ອງຕຳຫຼວດ, ກອງບັນຊາການ ປກສ ແຂວງ | ເປັນກຳມະການ; |
| 11. ຫົວໜ້າພະແນກການທີ່ກ່ຽວຂ້ອງ ກອງບັນຊາການ ປກສ ແຂວງ | ເປັນກຳມະການ; |
| 12. ຫົວໜ້າພະແນກສາທາລະນະສຸກແຂວງ | ເປັນກຳມະການ. |

❖ **ກອງເລຂາກອງທຶນ ປະກອບດ້ວຍ:**

| | |
|---|---|
| 1. ຫົວໜ້າຫ້ອງຕຳຫຼວດ, ກອງບັນຊາການ ປກສ ແຂວງ | ເປັນຫົວໜ້າ; |
| 2. ຫົວໜ້າພະແນກວດກາ ແລະ ຄວບຄຸມຢາເສບຕິດ, ກອງບັນຊາການ ປກສ ແຂວງ | ເປັນຮອງ; |
| 3. ຫົວໜ້າຫ້ອງການ, ກອງບັນຊາການທະຫານແຂວງ | ເປັນຄະນະ; |
| 4. ຫົວໜ້າຂະແໜງການທີ່ກ່ຽວຂ້ອງ, ຫ້ອງວ່າການແຂວງ | ເປັນຄະນະ; |
| 5. ຫົວໜ້າພະແນກສະກັດກັ້ນ ແລະ ຕ້ານຢາເສບຕິດ, ກອງບັນຊາການ ປກສ ແຂວງ | ເປັນຄະນະ; |
| 6. ຫົວໜ້າຂະແໜງຄຸ້ມຄອງຊັບສິນຂອງລັດ, ພະແນກການເງິນແຂວງ | ເປັນຄະນະ; |
| 7. ຫົວໜ້າຂະແໜງຈັດຕັ້ງປະຕິບັດຄຳຕັດສິນຂອງສານ, ພະແນກຍຸຕິທຳແຂວງ | ເປັນຄະນະ; |
| 8. ຫົວໜ້າຂະແໜງການທີ່ກ່ຽວຂ້ອງ, ສານປະຊາຊົນແຂວງ | ເປັນຄະນະ; |
| 9. ຫົວໜ້າໜ່ວຍງານທີ່ກ່ຽວຂ້ອງ, ກອງບັນຊາການ ປກສ ແຂວງ | ເປັນຄະນະ; |
| 10.ຫົວໜ້າຂະແໜງການທີ່ກ່ຽວຂ້ອງ, ອົງການໄອຍະການແຂວງ | ເປັນຄະນະ. |

**ມາດຕາ 15 ສິດ ແລະ ໜ້າທີ່ຂອງຄະນະກຳມະການກອງທຶນ**

1. ຄຸ້ມຄອງ ແລະ ບໍລິຫານກອງທຶນ ເພື່ອຜັນຂະຫຍາຍ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ;
2. ຄົ້ນຄວ້າ, ພິຈາລະນາ, ຮັບເອົາແຜນງົບປະມານ ແລະ ແຜນການເຄື່ອນໄຫວ ວຽກງານປະຈຳປີ ຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນຂອງຕົນພິຈາລະນາ ແລະ ຮັບຮອງ;
3. ຄົ້ນຄວ້າ,ສ້າງລະບຽບການກ່ຽວກັບການຄຸ້ມຄອງ, ການປົກປັກຮັກສາ ແລະ ການນຳໃຊ້ກອງທຶນລວມທັງຊັບສິນ, ພາຫະນະ ແລະ ວັດຖຸອຸປະກອນ ເພື່ອນຳສະເໜີໃຫ້ຄະນະກຳມະການ ກວດກາ ແລະ ຄວບຄຸມຢາເສບຕິດແຂວງ ພິຈາລະນາຮັບຮອງ;
4. ສະເໜີແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນ, ກຳນົດໜ້າທີ່ ແລະ ຂອບເຂດສິດ ຂອງຫົວໜ້າກອງເລຂາກອງທຶນ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ;
5. ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;
6. ຄຸ້ມຄອງ, ຕິດຕາມ ແລະ ກວດກາການເຄື່ອນໄຫວ ແລະ ການນຳໃຊ້ກອງທຶນໃຫ້ສອດຄ່ອງກັບລະບຽບການເປົ້າໝາຍ ແລະ ແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນ;
7. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດແຂວງ ປີລະສອງເທື່ອ;
8. ປະຕິບັດໜ້າທີ່ ແລະ ສິດອື່ນໆ ຕາມລະບຽບການ ແລະ ຕາມການມອບໝາຍ.

**ມາດຕາ 16 ສິດ ແລະ ໜ້າທີ່ຂອງກອງເລຂາກອງທຶນ**

1. ສ້າງ, ສັງລວມ ແລະ ນຳສະເໜີແຜນການນຳໃຊ້ກອງທຶນ ຕໍ່ຄະນະກຳມະການກອງທຶນ ເພື່ອພິຈາລະນາ ແລະ ຮັບຮອງເອົາ;
2. ສ້າງແຜນການ ເພື່ອລະດົມຂົນຂວາຍທຶນ ເຂົ້າກອງທຶນ ພ້ອມທັງມີໂຄງການລະອຽດ ເພື່ອນຳສະເໜີຕໍ່ຄະນະກຳມະການກອງທຶນ ພິຈາລະນາ ແລະ ຮັບຮອງເອົາ;
3. ສ້າງແຜນການເຄື່ອນໄຫວປະຈຳປີຂອງຄະນະກຳມະການກອງທຶນ ແລະ ກອງເລຂາກອງທຶນ ພ້ອມໂຄງການລະອຽດ ເພື່ອສະເໜີຕໍ່ ຄະນະກຳມະການກອງທຶນພິຈາລະນາ ແລະ ຮັບເອົາ;
4. ສ້າງກົດລະບຽບພາຍໃນ ກ່ຽວກັບການເຄື່ອນໄຫວຂອງ ຄະນະກຳມະການກອງທຶນ, ກອງເລຂາກອງທຶນ ແລະ ລະບຽບການຄຸ້ມຄອງ ແລະ ນຳໃຊ້ກອງທຶນ;
5. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນບໍ່ໃຫ້ຕົກເຮ່ຍເສຍຫາຍ;
6. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການທີ່ ຄະນະກຳມະການກອງທຶນ ໄດ້ຮັບຮອງ;
7. ຕິດຕາມ, ກວດກາ ແລະ ປະເມີນຜົນການນຳໃຊ້ກອງທຶນ ຂອງພາກສ່ວນຕ່າງໆ ທີ່ໄດ້ຮັບອະນຸມັດ;
8. ຈັດຕັ້ງກິດຈະກຳ,ປຸກລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ເຂົ້າກອງທຶນ;
9. ສະຫລຸບ ແລະ ລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນເພື່ອສະເໜີໃຫ້ ຄະນະກຳມະການກອງທຶນ ຮັບຊາບ ຢ່າງເປັນປົກກະຕິ;
10. ປະຕິບັດວຽກງານອື່ນ ຕາມການມອບໝາຍ ຂອງຄະນະກຳມະການກອງທຶນ.

**ມາດຕາ 17 ອາຍຸການ ແລະ ການປ່ຽນແປງຂອງຄະນະກາມະການກອງທຶນ**

1. ຄະນະກຳມະການກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຂັ້ນແຂວງ ມີອາຍຸການ 05 ປີ;

2. ຄະນະກຳມະການກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດສາມາດປັບປຸງ, ປ່ຽນແປງໄດ້ ຕາມຄວາມຈຳເປັນ ໂດຍການຕົກລົງຂອງເຈົ້າແຂວງ ໃນກໍລະນີຖ້າມີຄະນະກຳມະການ ຫຼື ກອງເລຂາ ທ່ານໃດໜຶ່ງຫາກຖືກຍົກຍ້າຍໜ້າທີ່ວຽກງານ, ເຂົ້າຮັບບຳນານ ແລະ ກໍລະນີອື່ນໆ ທີ່ບໍ່ສາມາດປະຕິບັດ ໜ້າທີ່ຂອງຕົນເອງໄດ້ນັ້ນ ແມ່ນໃຫ້ສະເໜີແຕ່ງຕັ້ງຜູ້ໃໝ່ປ່ຽນແທນ.

**ມາດຕາ 18 ການຈັດກອງປະຊຸມ**

1. ກອງປະຊຸມສາມັນ ຂອງຄະນະກຳມະການກອງທຶນ ຈັດຂຶ້ນປີລະ 02 ຄັ້ງ, ໃນກໍລະນີ ມີບັນຫາສຳຄັນ ທີ່ຕ້ອງໄດ້ປຶກສາຫາລື ແລະ ພິຈາລະນາຕົກລົງຮີບດ່ວນ ກໍ່ສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ທຸກເວລາ ຕາມການຮຽກປະຊຸມຂອງປະທານ ຫຼື ຕາມການສະເໜີຂອງສະມາຊິກຄະນະກຳມະການກອງທຶນ ແລະ ກອງປະຊຸມຈະເປີດຂຶ້ນໄດ້ກໍ່ຕໍ່ເມື່ອ ມີສະມາຊິກ ຂອງຄະນະກຳມະການກອງທຶນເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມຂອງຈຳນວນ ສະມາຊິກຄະນະກຳມະການກອງທຶນທັງໝົດ ແລະ ມະຕິກອງປະຊຸມ ຄະນະກຳມະການກອງທຶນຈະມີຜົນນຳໃຊ້ໄດ້ ກໍ່ຕໍ່ເມື່ອໄດ້ຮັບຄະແນນສຽງສ່ວນຫຼາຍຮັບຮອງ;
2. ກອງປະຊຸມສະຫຼຸບວຽກງານກອງທຶນ ຈັດຂຶ້ນປີລະ 02 ຄັ້ງ ຄື: ກອງປະຊຸມສະຫຼຸບການຈັດຕັ້ງປະຕິບັດວຽກງານກອງທຶນ 06 ເດືອນຕົ້ນປີ ແລະ ສະຫຼຸບປະຈຳປີ ໂດຍແຈ້ງເຊີນ ບັນດາຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດ ແລະ ຄະນະກຳມະການກອງທຶນ ຂັ້ນແຂວງເຂົ້າຮ່ວມ.

## ໝວດທີ 4
## ການສະຫຼຸບລາຍງານ ແລະ ການກວດສອບ

**ມາດຕາ 19 ການສະຫຼຸບລາຍງານ**

1. ກອງເລຂາກອງທຶນ ຕ້ອງສົ່ງບົດສະຫຼຸບລາຍງານການເຄື່ອນໄຫວຂອງກອງທຶນໃຫ້ຄະນະກຳມະການ ກອງທຶນ ຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນແຂວງ ເປັນປົກກະຕິທຸກໆ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ;
2. ຄະນະກຳມະການກອງທຶນ ຕ້ອງໄດ້ລາຍງານຜົນການຈັດຕັ້ງປະຕິບັດ ວຽກງານຂອງກອງທຶນປະຈຳປີ ຕໍ່ກອງປະຊຸມຂອງອົງການປົກຄອງແຂວງ ແລະ ກອງປະຊຸມສະໄໝສາມັນ ຂອງສະພາປະຊົນແຂວງ.

**ມາດຕາ 20 ການກວດສອບ ບັນຊີກອງທຶນ**

1. ບັນຊີກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຕ້ອງໄດ້ຮັບການກວດກາ ແລະ ກວດສອບທຸກປີ ຕາມລະບຽບການເຊິ່ງດຳເນີນໂດຍອົງການກວດສອບແຫ່ງລັດ ຫຼື ອົງການກວດກາທີ່ໄດ້ຮັບມອບໝາຍ;
2. ຜົນການກວດກາ ແລະ ກວດສອບ ຕ້ອງ ລາຍງານ ໃຫ້ປະທານຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ ແລະ ສາມາດເປີດເຜີຍໃຫ້ສັງຄົມຮັບຊາບ ຕາມການອະນຸຍາດ ຈາກປະທານ ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດຂັ້ນແຂວງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ຜູ້ທີ່ຮັບຜິດຊອບກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ຕຳແໜ່ງ, ໜ້າທີ່ເພື່ອຍັກຍອກ, ຫາຜົນປະໂຫຍດສ່ວນຕົວ ຫຼື ສ້າງຜົນເສຍຫາຍແກ່ຜູ້ອື່ນ;
2. ທວງເອົາ, ຂໍເອົາ, ຮັບສິນບົນຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ໜ້າທີ່;
4. ກົດໜ່ວງຖ່ວງດຶງ ເອກະສານ ໃນການແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງກອງທຶນ;
5. ຮຽກເອົາຄ່າທຳນຽມ, ຄ່າບໍລິການ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ປິດບັງ, ເຊື່ອງອຳ, ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
7. ເປີດເຜີຍຄວາມລັບ, ເພີ່ມ ຫຼື ຫຼຸດຕົວເລກງົບປະມານ, ການນຳໃຊ້ກອງທຶນຕາມລຳພັງໃຈ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ, ຂໍ້ຕົກລົງສະບັບນີ້ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ຂໍ້ຫ້າມສະເພາະຄະນະກຳມະການກອງທຶນ ແລະ ກອງເລຂາກອງທຶນ**

ຫ້າມຄະນະກຳມະການກອງທຶນ ແລະ ກອງເລຂາກອງທຶນ ມີພຶດຕິກຳ ດັ່ງນີ້:

1. ສວຍໂອກາດສໍ້ລາດບັງຫຼວງ;
2. ສົມຮູ້ຮ່ວມຄິດກັບເປົ້າໝາຍ ເພື່ອຍັກຍອກ ຫຼື ສໍ້ໂກງ;
3. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ອົງການຄຸ້ມຄອງ, ຕິດຕາມ ແລະ ກວດກາ

**ມາດຕາ 23 ອົງການຄຸ້ມຄອງ**

ອົງການປົກຄອງແຂວງຫຼວງນ້ຳທາ ເປັນຜູ້ຄຸ້ມຄອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ຢ່າງລວມສູນ ແລະ ເປັນເອກະພາບໃນທົ່ວແຂວງ.

**ອົງການຄຸ້ມຄອງປະກອບມີ:**

1. ກອງບັນຊາການ ປກສ ແຂວງ;
2. ພະແນກຍຸຕິທຳແຂວງ;
3. ອົງການໄອຍະການປະຊາຊົນແຂວງ;
4. ສານປະຊາຊົນແຂວງ;
5. ພະແນກການເງິນແຂວງ;
6. ພະແນກແຜນການ ແລະ ການລົງທຶນແຂວງ.

**ມາດຕາ 24 ອົງການກວດກາ ກອງທຶນ**

ອົງການກວດກາກອງທຶນ ປະກອບມີ:

1. ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງກອງທຶນ ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 23 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາ ພາຍນອກປະກອບມີ: ສະພາປະຊາຊົນແຂວງ, ອົງການກວດສອບພາກເໜືອ, ອົງການກວດກາລັດຂັ້ນແຂວງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ສື່ມວນຊົນ.

**ມາດຕາ 25 ເນື້ອໃນການກວດກາ**

ເນື້ອໃນການກວດກາກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນແຂວງ ມີດັ່ງນີ້:

1. ກວດກາການເຄື່ອນໄຫວ ການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງຄະນະກຳມະການຄຸ້ມຄອງກອງທຶນຕາມຫຼັກການ, ລະບຽບການຂອງກອງທຶນ;

2. ກວດກາທຸກ ລາຍຮັບ - ລາຍຈ່າຍ ຂອງກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ;
3. ກວດການຄຸ້ມຄອງ ແລະນຳໃຊ້ກອງທຶນຂອງແຕ່ລະພາກສ່ວນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 26 ຮູບແບບ ຂອງການກວດກາ**

ຮູບການກວດກາປະກອບດ້ວຍ:

1. ການກວດກາປົກກະຕິ ຊຶ່ງແມ່ນກວດກາຕາມແຜນການທີ່ກຳນົດໄວ້;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາ ຊາບລ່ວງໜ້າ;
3. ການກວດກາກະທັນຫັນ ແມ່ນກວດກາໂດຍຮີບດ່ວນຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

**ໝວດທີ 7**

**ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ**

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດຂັ້ນແຂວງ ຈະໄດ້ຮັບ ການຍ້ອງຍໍຕາມຄວາມເໝາະສົມ ແລະ ລະບຽບການ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ ແລະ ດຳເນີນຄະດີຕາມຂະບວນຍຸຕິທຳ.

**ໝວດທີ 8**

**ບົດບັນຍັດສຸດທ້າຍ**

**ມາດຕາ 29 ການຈັດຕັ້ງປະຕິບັດ**

1. ຄະນະກຳມະການ ແລະ ກອງເລຂາກອງທຶນ ມີໜ້າທີ່ປະສານສົມທົບກັບພາກ ສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງ ສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານສະພາບການເຄື່ອນ ໄຫວຮອບດ້ານຂອງກອງທຶນ ໃຫ້ຄະນະກຳມະການກວດກາ ແລະ ຄວບຄຸມຢາເສບຕິດແຂວງ ປີລະສອງເທື່ອ;
2. ບັນດາພະແນກການ, ອົງການທຽບເທົ່າ, ສອງກອງບັນຊາການ ປກຊ - ປກສ ແຂວງ, ອົງການປົກຄອງ 5 ເມືອງ, ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມືໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນ ພາຍຫຼັງໄດ້ລົງຈົດໝາຍເຫດ ທາງລັດຖະການ 15 ວັນ.

ຂໍ້ຕົກລົງ ສະບັບນີ້ ປ່ຽນແທນກົດລະບຽບຂອງ ທ່ານເຈົ້າແຂວງ ສະບັບເລກທີ 01/ຈຂ, ລົງວັນທີ 12 ມິຖຸນາ 2018 ວ່າດ້ວຍກອງທຶນຄວບຄຸມ ສະກັດກັ້ນ ແລະ ຕ້ານຢາເສບຕິດ ແຂວງຫຼວງນ້ຳທາ.

ຂໍ້ກຳນົດ, ລະບຽບການໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແລ້ວແຕ່ຖືກຍົກເລີກ.

ເຈົ້າແຂວງ

ແຂວງຫຼວງນ້ຳທາ
ເຈົ້າແຂວງ

ສີວິໄລ ບັນແກ້ວ